ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 1389 /ກປ

ນະຄອນຫຼວງວຽງຈັນ, ວັນທີ 17 JUL 2013

19 JUL 2013 ພູວົນ ລາດຊະວົງ

ຂາເຂົ້າ ເລກທີ 1220 ລົງວັນທີ 19.7.13

# ຂໍ້ຕົກລົງ
## ຂອງລັດຖະມົນຕີ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງຂະແໜງປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 262/ນຍ, ລົງວັນທີ 28/06/2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 1887/ກປ, ລົງວັນທີ 09/08/2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມປ່າໄມ້.
- ອີງຕາມ ການເຫັນດີເປັນເອກະພາບຂອງຄະນະປະຈຳພັກກະຊວງກະສິກຳ ແລະ ປ່າໄມ້ ຄັ້ງວັນທີ 01 ກໍລະກົດ 2013.

### ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຂະແໜງປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ແນໃສ່ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ ໃນຂອບເຂດປ່າຜະລິດ, ປ່າປູກ, ປ່າໄມ້ບ້ານ ທີ່ຕົນຮັບຜິດຊອບໃຫ້ມີປະສິດທິຜົນ ແລະ ມີຄວາມຍືນຍົງ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ຂະແໜງປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງ ຂຽນເປັນຕົວອັກສອນຫຍໍ້ວ່າ **"ປມຂ" ປມນວ** ແມ່ນອົງການຈັດຕັ້ງໜຶ່ງ ທີ່ສັງກັດຢູ່ໃນກົງຈັກການຈັດຕັ້ງຂອງພະແນກກະສິກຳ ແລະ ປ່າໄມ້ ມີຖານະເທົ່າທຽມກັບຂະແໜງການອື່ນໆ ທີ່ຂຶ້ນກັບພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ມີພາລະບົດບາດເປັນເສນາທິການໃຫ້ແກ່ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ກົມປ່າໄມ້ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ ໃຫ້ມີຄວາມຍືນຍົງ ແລະ ມີປະສິດທິຜົນໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 3. ໜ້າທີ່

1. ຈັດຕັ້ງຜັນຂະຫຍາຍກົດໝາຍ, ລະບຽບການ ແລະ ນິຕິກຳຕ່າງໆ ກ່ຽວກັບວຽກງານປ່າໄມ້ ແລະ ເປັນເຈົ້າການໃນການສ້າງ, ປະຕິບັດ ແລະ ປະເມີນຜົນແຜນຍຸດທະສາດປ່າໄມ້ ໃນລະດັບແຂວງ ແລະ ນະຄອນຫຼວງ;
2. ກຳນົດລະບົບຄຸ້ມຄອງ, ລະບຽບປະຕິບັດ ສຳລັບຄຸ້ມຄອງການພັດທະນາທີ່ດິນປ່າໄມ້ທັງໝົດພາຍໃນແຂວງ ແລະ ນະຄອນຫຼວງ ຊຶ່ງລວມມີ ເຂດປ່າຜະລິດ, ເຂດສຳປະທານປູກໄມ້, ປ່າໄມ້ບ້ານ ລວມທັງສວນປູກໄມ້ຂອງຄອບຄົວປະຊາຊົນ ເຊັ່ນ: (ປ່າວັນນະກະເສດ ແລະ ສວນປູກໄມ້), ປ່າໄມ້ສັງຄົມ, ປ່າສາທາລະນະ, ປ່າໃນພື້ນທີ່ບຸກຄົນ, ການຄຸ້ມຄອງບັນດາທຸລະກິດໄມ້ (ຖ່ານ, ໄມ້ຟືນ, ຢາພື້ນເມືອງ, ໄມ້ເສົາ, ໄມ້ຫຼັກ, ໄມ້ຄ້ຳແບບ, ເຄື່ອງປ່າຂອງດົງ ແລະ ອື່ນໆ) ພ້ອມທັງສ້າງແຜນຈັດສັນຄຸ້ມຄອງ;
3. ປະຕິບັດສົນທິສັນຍາສາກົນ ທີ່ລັດຖະບານ ສປປ ລາວ ເປັນພາຄີ;
4. ຮັບຜິດຊອບການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ, ນຳໃຊ້ຊັບພະຍາກອນປ່າໄມ້ ລວມທັງທີ່ດິນປ່າໄມ້ ໃນເຂດປ່າຜະລິດ, ປ່າຟື້ນຟູ, ປ່າປູກ, ເຂດຄຸ້ມຄອງຂອງບ້ານ ແລະ ເຂດທີ່ຍັງບໍ່ທັນໄດ້ກຳນົດປະເພດໃຫ້ມີຄວາມຍືນຍົງ;
5. ວາງແຜນການ ແລະ ມາດຕະການ ກ່ຽວກັບການຟື້ນຟູປ່າ, ການປູກໄມ້ ແລະ ການຈັດສັນເຄື່ອງປ່າຂອງດົງໃນເຂດທີ່ຕົນຮັບຜິດຊອບ;
6. ຄຸ້ມຄອງການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ຕາມແຜນອະນຸມັດຂອງລັດຖະບານ; ຄຸ້ມຄອງກອງຂຸດຄົ້ນໄມ້ ຫຼື ວິສະຫະກິດຂຸດຄົ້ນໄມ້, ກົນຈັກ, ອຸປະກອນ ແລະ ແຮງງານຂຸດຄົ້ນໄມ້;
7. ຄຸ້ມຄອງ ແລະ ຢັ້ງຢືນ ການເຄື່ອນຍ້າຍໄມ້ ແລະ ຜະລິດຕະພັນໄມ້ ຢູ່ພາຍໃນ ແລະ ອອກຕ່າງປະເທດ;
8. ຊຸກຍູ້ສົ່ງເສີມດ້ານເຕັກນິກວິຊາການເກັບແກ່ນ, ສ້າງສວນກ້າ, ກ້າເບ້ຍໄມ້, ປູກໄມ້, ຟື້ນຟູປ່າ, ຈັດຕັ້ງພິທີປູກໄມ້ ແລະ ເຄື່ອງປ່າຂອງດົງໃນແຕ່ລະປີ;
9. ຄຸ້ມຄອງ ແລະ ຂຶ້ນທະບຽນສວນປູກໄມ້, ໄມ້ປູກ, ແຫຼ່ງແກ່ນພັນໄມ້, ດອນຕົວຢ່າງຖາວອນ, ສະຖານທີ່ຄົ້ນຄ້ວາທົດລອງທາງວິທະຍາສາດປ່າໄມ້, ສວນກ້າເບ້ຍໄມ້, ເຄື່ອງປ່າຂອງດົງ ແລະ ຮັບຜິດຊອບວຽກງານຢັ້ງຢືນປ່າໄມ້;
10. ຮັບຜິດຊອບວຽກງານຢັ້ງຢືນປ່າໄມ້;
11. ສັງລວມແຜນສະເໜີ ຂຸດຄົ້ນໄມ້ຕາມແຜນຈັດສັນ, ໄມ້ເຂດກໍ່ສ້າງພື້ນຖານໂຄງລ່າງ, ເຂດບຸກເບີກເນື້ອທີ່ຕ່າງໆ ທີ່ລັດຖະບານອະນຸມັດ ແລະ ແຜນເກັບກູ້ເຄື່ອງປ່າຂອງດົງ ເພື່ອນຳສະເໜີຂໍອະນຸມັດຈາກລັດຖະບານ;
12. ຄຸ້ມຄອງການນຳໃຊ້ໄມ້ເປັນພະລັງງານ, ໄມ້ຄ້ຳແບບ, ໄມ້ຫຼັກຣົ້ວ ແລະ ພືດເປັນຢາ;
13. ຮັບຜິດຊອບການອະນຸຍາດຂຸດຄົ້ນໄມ້ປູກ, ການກວດກາໄມ້ປູກ, ສວນປູກ ແລະ ການຢັ້ງຢືນໄມ້ປູກ;
14. ພັດທະນາ ແລະ ສ້າງຄວາມສາມາດໃຫ້ບຸກຄະລາກອນ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ ພ້ອມທັງຄຸ້ມຄອງລະບົບຂໍ້ມູນຂ່າວສານປ່າໄມ້;
15. ຈັດຕັ້ງປະຕິບັດວຽກງານຄຸ້ມຄອງການປ່ຽນແປງດິນຟ້າອາກາດ ຈາກການທຳລາຍປ່າໄມ້ ແລະ ຕິດຕາມການເກັບລາຍຮັບເຂົ້າກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
16. ຕິດຕາມ, ລາດຕາເວນຢູ່ພາຍໃນຂອບເຂດປ່າຜະລິດ, ປ່າປູກ, ປ່າໄມ້ບ້ານ ແລະ ປ່າໄມ້ທີ່ຍັງບໍ່ທັນໄດ້ກຳນົດເຂົ້າໃນແຕ່ລະປະເພດປ່າ ທີ່ຕົນຮັບຜິດຊອບ ເພື່ອສະກັດກັ້ນການບຸກລຸກທຳລາຍຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້, ໄຟໄໝ້ລາມປ່າ, ການລັກລອບລ່າ ຊື້-ຂາຍສັດນ້ຳ, ສັດປ່າ ແລະ ພືດປ່າ;
17. ຊຸກຍູ້ໜ່ວຍງານປ່າໄມ້ເມືອງ, ຈຸງານປ່າໄມ້ເຂດ ແລະ ອຳນາດການປົກຄອງບ້ານ ເພື່ອເກັບກຳຂໍ້ມູນ, ສຳຫຼວດ, ກຳນົດເຂດທີ່ຈະຟື້ນຟູປ່າ, ເນື້ອທີ່ສວນປູກໄມ້, ໄມ້ປູກ ແລະ ເຄື່ອງປ່າຂອງດົງ ເພື່ອຂຶ້ນທະບຽນ;

18. ຈັດຕັ້ງປະຕິບັດແຜນຈັດສັນຄຸ້ມຄອງປ່າຜະລິດແບບຍືນຍົງ ແລະ ສຳຫຼວດວາງແຜນຈັດສັນປ່າໄມ້ໃນເຂດທີ່ຍັງບໍ່ທັນໄດ້ກຳນົດເຂົ້າໃນແຕ່ລະປະເພດປ່າ;
19. ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນດ້ານປ່າໄມ້ ແລະ ເຄື່ອງປ່າຂອງດົງໃຫ້ຖືກຕ້ອງຕາມລະບຽບຫຼັກການ;
20. ຍາດແຍ່ງເອົາການຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິທະຍາສາດ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຈັດຕັ້ງປະຕິບັດບັນດາແຜນງານ, ແຜນການ ແລະ ໂຄງການຂອງຂະແໜງປ່າໄມ້;
21. ຄົ້ນຄ້ວາ ປະກອບຄຳເຫັນ ກ່ຽວກັບການຂໍລົງທຶນດ້ານປ່າໄມ້ ແລະ ເຄື່ອງປ່າຂອງດົງຂອງຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ ເພື່ອນຳສະເໜີກົມປ່າໄມ້ພິຈາລະນາ;
22. ຄຸ້ມຄອງ ແລະ ນຳໃຊ້ຊັບສິນສ່ວນລວມ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ມີປະສິດທິຜົນ;
23. ປະສານສົມທົບກັບຂະແໜງຄຸ້ມຄອງຊັບພະຍາກອນທຳມະຊາດປ່າໄມ້ ແລະ ກອງກວດກາປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ, ຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ ແລະ ພາກສ່ວນອື່ນໆ ໃນການຈັດຕັ້ງປະຕິບັດການຄຸ້ມຄອງກິດຈະການປ່າໄມ້, ສັດນໍ້າ ແລະ ສັດປ່າ;
24. ສະຫຼຸບ ລາຍງານຜົນການຈັດຕັ້ງປະຕິບັດກິດຈະກຳຕ່າງໆ ໃຫ້ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ແລະ ກົມປ່າໄມ້ ເປັນປົກກະຕິ;
25. ຄົ້ນຄວ້າການກຳນົດຕຳແໜ່ງງານ ແລະ ການຈັດວາງບຸກຄະລາກອນ ທີ່ຂຶ້ນກັບຂະແໜງປ່າໄມ້, ໜ່ວຍງານປ່າໄມ້ເມືອງ ແລະ ຈຸງານປ່າໄມ້ເຂດ ເພື່ອສະເໜີພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງ ພິຈາລະນາອະນຸມັດ;
26. ສ້າງແຜນຄວາມຕ້ອງການດ້ານບຸກຄະລາກອນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຂອງຂະແໜງປ່າໄມ້ ແລ້ວນຳສະເໜີຂັ້ນເທິງພິຈາລະນາ;
27. ສ້າງແຜນການ ເພື່ອຈັດຕັ້ງປະຕິບັດ, ໂຄງການ, ງົບປະມານປະຈຳປີ ພ້ອມທັງຕິດຕາມ, ປະເມີນຜົນ ແລະ ສະຫຼຸບຕີລາຄາ, ລາຍງານໃຫ້ພະແນກກະສິກຳ ແລະ ປ່າໄມ້ ແລະ ກົມປ່າໄມ້ ຮັບຊາບເປັນແຕ່ລະໄລຍະ;
28. ຕິດຕາມປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ນິຕິກຳຕ່າງໆ ກ່ຽວກັບການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ ແບບຍືນຍົງ;
29. ປະຕິບັດໜ້າທີ່ອື່ນໆ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 4. ຂອບເຂດສິດ**

1. ປະຕິບັດກົດໝາຍ, ດຳລັດ, ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ, ລະບຽບການ ແລະ ເຕັກນິກ ກ່ຽວກັບວຽກງານຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ຊັບພະຍາກອນປ່າໄມ້;
2. ຊີ້ນຳວິຊາການປ່າໄມ້ ປະຕິບັດສິດ ແລະ ໜ້າທີ່ຂອງຕົນຕາມສາຍຕັ້ງຂອງຂະແໜງປ່າໄມ້;
3. ສະເໜີ ປະກອບຄຳຄິດເຫັນ ເພື່ອປັບປຸງບັນດານິຕິກຳຕ່າງໆ ກ່ຽວກັບວຽກງານຄຸ້ມຄອງຊັບພະຍາກອນປ່າໄມ້;
4. ນຳສະເໜີຂໍສ້າງຕັ້ງ ຫຼື ຍຸບເລີກ ບັນດາໜ່ວຍງານ, ຂອບເຂດສິດ, ໜ້າທີ່, ຕຳແໜ່ງງານ ແລະ ບັນຈຸ ຊັບຊ້ອນພະນັກງານເຂົ້າໃນບັນດາໜ່ວຍງານພາຍໃນຂະແໜງຂອງຕົນ ເພື່ອນຳສະເໜີພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ພິຈາລະນາອະນຸມັດ;
5. ນຳສະເໜີພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ກ່ຽວກັບການປະຕິບັດນະໂຍບາຍຕ່າງໆ ຕໍ່ຜູ້ມີຜົນງານດີເດັ່ນ ແລະ ປະຕິບັດວິໄນຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການຕ່າງໆ ແຕ່ງຕັ້ງ ຫຼື ປົດຕຳແໜ່ງ, ຍົກຍ້າຍ, ຊັບປ່ຽນບ່ອນປະຈຳການຂອງພະນັກງານພາຍໃນຂະແໜງປ່າໄມ້;
6. ເຂົ້າຮ່ວມກອງປະຊຸມ, ພິທີເຊັນສັນຍາ ແລະ ບົດບັນທຶກການຮ່ວມມືທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;

7. ຄົ້ນຄວ້າ, ນຳສະເໜີ ພະແນກກະສິກຳ ແລະ ປ່າໄມ້ ແລະ ກົມປ່າໄມ້ ຂໍອະນຸມັດສືບຕໍ່ ຫຼື ລົບລ້າງການລົງທຶນ ໃນຂະແໜງການປ່າໄມ້ ຂອງນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງລັດ;
8. ຕິດຕາມ ການຈັດຕັ້ງປະຕິບັດ ບັນດາໂຄງການລົງທຶນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ດ້ານປ່າໄມ້ ແລະ ທີ່ດິນປ່າໄມ້;
9. ປະຕິບັດສິດອື່ນໆ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5. ໂຄງປະກອບກົງຈັກ

ຂະແໜງປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ປະກອບດ້ວຍ 5 ໜ່ວຍງານ ດັ່ງນີ້:

1. ໜ່ວຍງານ ບໍລິຫານ ແລະ ແຜນການ
2. ໜ່ວຍງານ ຄຸ້ມຄອງປ່າຜະລິດ ແລະ ການຂຸດຄົ້ນໄມ້
3. ໜ່ວຍງານ ສົ່ງເສີມການປູກໄມ້ ແລະ ການລົງທຶນປ່າໄມ້
4. ໜ່ວຍງານ ຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ
5. ໜ່ວຍງານ ສຳຫຼວດ ແລະ ວາງແຜນປ່າໄມ້

ນອກຈາກນີ້ ຂະແໜງປ່າໄມ້ຍັງມີໜ່ວຍງານປ່າໄມ້ເມືອງ ແລະ ຈຸງານປ່າໄມ້ເຂດ ແນໃສ່ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ມີຄວາມຍືນຍົງ ແລະ ໂຄງການຈຳນວນໜຶ່ງ ທີ່ຂຶ້ນກັບສາຍຕັ້ງຂອງຕົນ.

### ມາດຕາ 6. ໂຄງປະກອບດ້ານບຸກຄະລາກອນ

1. ຂະແໜງປ່າໄມ້ ປະກອບດ້ວຍ ຫົວໜ້າຂະແໜງ 1 ທ່ານ ແລະ ຮອງຫົວໜ້າຂະແໜງຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງຈາກທ່ານເຈົ້າແຂວງ, ເຈົ້າຄອງນະຄອນ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ ຜ່ານຄະນະຈັດຕັ້ງແຂວງ, ບົນພື້ນຖານມາດຕະຖານເງື່ອນໄຂຂອງຕຳແໜ່ງບໍລິຫານທີ່ກະຊວງກະສິກຳ ແລະ ປ່າໄມ້ ວາງອອກ ແລະ ການປະສານສົມທົບຂໍຄຳເຫັນເປັນລາຍລັກອັກສອນຈາກລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້;
2. ຂະແໜງປ່າໄມ້ ປະກອບມີຫົວໜ້າໜ່ວຍງານ ແລະ ຮອງຫົວໜ້າໜ່ວຍງານຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງຈາກທ່ານເຈົ້າແຂວງ, ເຈົ້າຄອງນະຄອນ ຕາມການສະເໜີຂອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ແລະ ຫົວໜ້າຂະແໜງປ່າໄມ້ ບົນພື້ນຖານມາດຕະຖານເງື່ອນໄຂຂອງຕຳແໜ່ງບໍລິຫານທີ່ກະຊວງກະສິກຳ ແລະ ປ່າໄມ້ ວາງອອກ ແລະ ການປະສານສົມທົບຂໍຄຳເຫັນເປັນລາຍລັກອັກສອນຈາກລັດຖະມົນຕີວ່າການກະ ຊວງກະສິກຳ ແລະ ປ່າໄມ້;
3. ແຕ່ລະໜ່ວຍງານ ປະກອບມີພະນັກງານວິຊາການ ຕາມການກຳນົດຕຳແໜ່ງງານ ທີ່ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງ ອະນຸມັດ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7. ຫຼັກການ**

1. ປະຕິບັດຫຼັກການລວມສູນ ປະຊາທິປະໄຕ ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ ສົມທົບກັບການປະຕິບັດລະບອບຫົວໜ້າດຽວ ຕາມລະບົບແບ່ງຂັ້ນຄຸ້ມຄອງ ບົນພື້ນຖານມີການແບ່ງງານກັນຢ່າງລະອຽດຈະແຈ້ງໃນໝູ່ຄະນະ ພ້ອມທັງມອບຄວາມຮັບຜິດຊອບ ແລະ ສິດໃນການຕັດສິນບັນຫາພາຍໃນຂອບເຂດຂອງແຕ່ລະຂັ້ນ.

**ມາດຕາ 8. ແບບແຜນວິທີເຮັດວຽກ**

1. ຫົວໜ້າຂະແໜງປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ມີຄວາມຮັບຜິດຊອບໂດຍກົງຕໍ່ຄະນະພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ແລະ ຄະນະກົມປ່າໄມ້ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ; ຮອງຫົວໜ້າຂະແໜງ ມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງຕາມການແບ່ງງານ ແລະ ມອບໝາຍຂອງຫົວໜ້າຂະແໜງ;
2. ຫົວໜ້າຂະແໜງປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສຳຄັນ, ກໍລະນີຕິດຂັດຫຼື ໄປເຄື່ອນໄຫວວຽກງານທາງລັດຖະການ ຕ້ອງມອບສິດປະຈຳການຊົ່ວຄາວ ໃຫ້ຮອງຫົວໜ້າຂະແໜງ ຜູ້ໃດຜູ້ໜຶ່ງວ່າການແທນ, ໃນເມື່ອຫົວໜ້າຂະແໜງກັບຄືນມາປະຈຳການແລ້ວ ຜູ້ວ່າການຕ້ອງລາຍງານວຽກທີ່ຕົນໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງໃຫ້ຫົວໜ້າຂະແໜງຊາບ;
3. ການເຄື່ອນໄຫວຂອງຂະແໜງປ່າໄມ້ ແມ່ນບົນພື້ນຖານແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ, ຫັນເອົາຍຸດທະສາດຂອງປ່າໄມ້ ໃຫ້ກາຍເປັນແຜນການ ແລະ ໂຄງການລະອຽດ ແລ້ວຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ;
4. ບັນດາໜ່ວຍງານ ແລະ ໂຄງການ ທີ່ຂຶ້ນກັບຂະແໜງປ່າໄມ້ ມີໜ້າທີ່ຮັບຜິດຊອບຈັດຕັ້ງ, ປຸກລະດົມ, ຊຸກຍູ້ການປະຕິບັດແຜນການຂອງຂະແໜງ, ພະແນກກະສິກຳ ແລະ ປ່າໄມ້, ກົມປ່າໄມ້ ວາງອອກໃຫ້ສຳເລັດ ແລະ ມີປະສິດທິຜົນ;
5. ບັນດາເອກະສານ ກ່ຽວກັບວຽກງານປ່າໄມ້ທີ່ມາຈາກຫ້ອງການ, ບັນດາກົມ, ທ້ອງຖິ່ນ ແລະ ຂະແໜງການອື່ນໆ ຕ້ອງໄດ້ຜ່ານຂາອອກ-ຂາເຂົ້າ ແລ້ວມີຄຳເຫັນຂອງຫົວໜ້າ ຫຼື ຄະນະ ຖ້າກ່ຽວພັນກັບໜ່ວຍງານໃດ ແມ່ນໜ່ວຍງານນັ້ນຄົ້ນຄວ້າ ແລະ ປະກອບຄຳເຫັນເສຍກ່ອນ ແລ້ວຈຶ່ງນຳສະເໜີຫາຂະແໜງປ່າໄມ້ ທີ່ໄດ້ກຳນົດໄວ້, ຫຼັງຈາກນັ້ນ ຈຶ່ງສະ ເໜີຫາພະແນກກະສິກຳ ແລະ ປ່າໄມ້ ພິຈາລະນາ;
6. ພົວພັນ ແລະ ປະສານສົມທົບກັບຫ້ອງການ, ບັນດາກົມ, ສະຖາບັນ, ພະແນກການ, ວິທະຍາໄລ, ໂຮງຮຽນ, ສູນ, ສະຖານີ, ຂະແໜງການສາຍຕັ້ງ ແລະ ໂຄງການອື່ນໆ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ເພື່ອຈັດຕັ້ງປະຕິບັດວຽກງານໃຫ້ສຳເລັດຕາມເປົ້າໝາຍທີ່ວາງໄວ້;
7. ປະຕິບັດລະບອບປະຊຸມສ່ອງແສງລາຍງານປະຈຳອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ, ສະຫຼຸບສັງລວມສະພາບການຮອບດ້ານ ເພື່ອລາຍງານໃຫ້ພະແນກກະສິກຳ ແລະ ປ່າໄມ້, ກົມປ່າໄມ້ ຕາມເວລາທີ່ໄດ້ກຳນົດໄວ້./

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9. ງົບປະມານ ແລະ ຕາປະທັບ**

ຂະແໜງປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ມີງົບປະມານ, ຕາປະທັບ, ເຄື່ອງໝາຍ ແລະ ເຄື່ອງແບບສີຂຽວປ່າໄມ້ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 10. ການຜັນຂະຫຍາຍ**

ມອບໃຫ້ຫົວໜ້າຂະແໜງປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ເປັນຜູ້ກຳນົດກ່ຽວກັບພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ໂຄງປະກອບການຈັດຕັ້ງຂອງບັນດາໜ່ວຍງານ ທີ່ເປັນສາຍຕັ້ງຂອງຕົນປະຈຳທ້ອງຖິ່ນ ບົນພື້ນຖານການເຫັນດີຈາກພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ, ພ້ອມທັງຜັນຂະຫຍາຍຂໍ້ຕົກລົງສະບັບນີ້ໃຫ້ເປັນກົດລະບຽບພາຍໃນຂອງຕົນເພື່ອຈັດຕັ້ງປະຕິບັດ.

**ມາດຕາ 11. ການຈັດຕັ້ງປະຕິບັດ**

ຂະແໜງປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ, ຫ້ອງການກະຊວງ, ບັນດາກົມ, ສະຖາບັນ, ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ, ວິທະຍາໄລ, ໂຮງຮຽນ, ສູນ, ສະຖານີ ແລະ ພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0723/ກປ, ລົງວັນທີ 15/03/2013 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຂະແໜງປ່າໄມ້.

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

ວິໄລວັນ ພົມເຂ